# ຄະນະບານເຕະກົມເງິນຕາຕີສະເໝີ ອປທ ໃນນັດ"ພົບເພື່ອນ"




ການຍົກທີມພົບກັນຂອງຄະນະບານເຕະຊາວໜຸ່ມ ກົມເງິນຕາ-ຄັງສາງ ທະນາຄານ ແຫ່ງ ສປປ ລາວ ກັບຊາວໜຸ່ມອົງການ ໄປສະນີໂທລະຄົມມະນາຄົມ ແຫ່ງຊາດ ທ່າມກາງສາຍຝົນໂຮຍຮໍາເຮັດໃຫ້ສະໜາມແຂ່ງຂັນເຕັມໄປດ້ວຍເມັດນໍ້າ-ຂີ້ຕົມ,ແຕ່ສິ່ງດັ່ງກ່າວ ມັນກໍ່ບໍ່ໄດ້ຫັກຫ້າມຫົວໃຈແຫ່ງຄວາມເປັນມິດຂອງພວກຊາວໜຸ່ມ ນີ້ໄດ້ເຊິ່ງການແຂ່ງຂັນໄດ້ຈັດຂຶ້ນໃນ ຕອນຫົວຄໍ່າໃນວັນທີ 22 ມັງກອນຜ່ານມາ.

ການແຂ່ງຂັນໄດ້ເປີດສາກຍິງປະຕູທັກຖາມເພື່ອນ ໃນນາທີທີ່ 10 ໂດຍການຍິງຂອງ ແສງສະຫວັນ ເບີ 11 ຈາກກົມເງິນຕາ, ຈາກນັ້ນອຸນນະພູມຂອງ ການແຂ່ງຂັນມິດຕະພາບໄດ້ ລຸກຂຶ້ນຢ່າງທັນຄັວນ ໂດຍສິນະຄອນ ເບີ 22 ຈາກ ອປທ ຕີສະເໝີໃນນາທີ 16 ໃນເວລາຕໍ່ ມາ ພອນຜະລິດ ເບີ 9 ກົມເງິນຕາກໍ່ໄດ້ລາກບານຍິງໃຫ້ຝ່າຍຕົນແຊ່ງໄປກ່ອນ,ເກມຍິ່ງຮ້ອນຂຶ້ນເຖິງວ່າອາກາດໃນຂອບສະໜາມຈະເຢັນລົງກ່ວາປົກກະຕິແຕ່ນໍ້າໃຈນັກສູ້ຍິ່ງມີປະ ກາຍເພີ່ມຂຶ້ນ ແລະ ໃນນນາທີ່ 27 ສຸລິວັນເບີ 17 ຈາກ ອປສ ກໍ່ທັບໄຂ່ແຕກ 2 ຕໍ່ 2.

ໃນນາທີ 68 ລູກທີມຂອງຝ່າຍຊາວໜຸ່ມເງິນຕາ ໄດ້ໃຊ້ມືສໍາພັດລູກບານອັນໄດ້ເຮັດໃຫ້ຝ່າຍ ອປທ ໄດ້ຍິງລູກໂທດໃນໄລບະຈໍ້ໆ(ເຜົາຂົນ) ໂດຍໄຊລັດດາເບີ 18 ໄດ້ ຮັບສິດຍິງເຂົ້າ ຢ່າງແຮງ ເຮັດໃຫ້ ອປທ ນໍາໜ້າໄປກ່ອນໜຶ່ງລູກ, ຂາເຊຍກົມເງິນ

ຕາບໍ່ຍອມນັ່ງ, ລຸກຢືນເຊຍຢ່າງໃຫຍ່ເພື່ອສົ່ງແຮງໃຈໄປຍັງຝ່າຍຕົນແຕ່ກໍ່ມີບາງຄົນກໍ່ໄດ້ສົ່ງສຽງເຊຍໄປຍັງໜຸ່ມ ອປທ,

ຈາກນັ້ນການຕໍ່ສູ້ຍິ່ງດຸເດືອດຟົດຟື້ນຂື້ນນຳຊັກໃຊ້ເຮັດໃຫ້ສອງຝ່າຍຍິງເຂົ້າປະຕູສະຫຼັບກັນໂດຍແມ່ນການຍິງຂອງ ອູ່ແກ້ວ ເບີ 88 ກົມເງິນຕາ, ສຸລິວັນ ເບີ 17 ຈາກ ອປທ ແລະ ໄຊລັດດາ ຈາກ ອປທ ແລະ ໃນສຸດທ້າຍຫົວໜ້າກັບຕັນທີມສອງທີມໄດ້ບອກກັບຄົນ ຂ່າວ ວ່າ: ການແຂ່ງຂັນມິດຕະພາບໃນນັດ”ພົບເພື່ອນ” ແມ່ນສະເໝີກັນ 5 ຕໍ່ 5 ແລະ ໄດ້ຖີ້ມ ທ້າຍໄວ້ວ່າ: ການແຂ່ງຂັນໃນຄັ້ງນີ້ພວກເຮົາພ້ອມກັນໄດ້ຮອຍຍິ້ມແຫ່ງມິດໄມຕີ, ບົດຮຽນອັນດີ ແລະ ເປັນການສ້າງພາລະກຳລັງ ແລະ ກໍ່ທັງເປັນການສ້າງຂະບວນຕ້ອນຮັບກອງປະຊຸມ ໃຫຍ່ຂອງໜ່ວຍພັກກົມເງິນຕາ ຂອງຄະນະພັກ ອປທ ແລະ ວັນສຳຄັນຂອງຊາດໃນຕໍ່ໜ້າ.